## I. ພາກສະເໜີ ( Introduction ).

ໃນປະຈຸບັນການປູກໄມ້ສັກແມ່ນເປັນຂະບວນການທີ່ກ້ວາງຂວາງ ແລະແພ່ຫລາຍໃນທົ່ວປະເທດ ໂດຍສະເພາະແມ່ນ ແຂວງພາກເໜືອ. ຈຸດປະສົງຫລັກ ຂອງການປູກໄມ້ສັກ ກໍ່ເພື່ອຮັບໃຊ້ເຂົ້າໃນການປຸກສ້າງ ທີ່ພັກອາໄສ, ເຄື່ອງຮັບໃຊ້ພາຍໃນຄົວເຮືອນ, ຂາຍເປັນເສດຖະກິດຂອງຄອບຄົວ ແລະເພື່ອຮັບປະກັນສິດໃນການນຳໃຊ້ທີ່ດິນ. ສະນັ້ນເພື່ອຮັບປະກັນໃຫ້ສວນປູກໄມ້ສັກມີການຈະເລີນເຕີບໂຕດີນັ້ນ, ເຫັ້ງາທີ່ນຳມາປູກກໍ່ເປັນບັນຫາສຳຄັນສຳລັບຊາວກະສິກອນທີ່ມີຄວາມສົນໃຈປູກໄມ້ສັກ ເພາະການປູກໄມ້ສັກດ້ວຍເຫງົ້າເປັນວິທີທີ່ປູກງ່າຍ ມີຄວາມສະດວກດີ ເສຍຄ່າໃຊ້ຈ່າຍໜ້ອຍ ແລະ ຍັງເຮັດໃຫ້ຕົ້ນໄມ້ສັກ ມີການຈະເລີນເຕີບໂດດີ, ເພາະໃນເຫງົ້າສັກມີການສະສົມທາດອາຫານໄວ້ສຳລັບການຈເລີນເຕີບໂຕ ( ກົມປ່າໄມ້, ພ.ສ 2539).

## II. ປັດໃຈສິ່ງແວດລ້ອມທີ່ເໝາະສົມ.

- ໄມ້ສັກຈະເລີນເຕີບໂຕໄດ້ດີໃນພື້ນທີ່ຊຸ່ມຊື່ນຫລາຍກ່ວາພື້ນມີ່ແຫ້ງແລ້ງ ປະລິມານນ້ຳຝົນຢູ່ລະຫວ່າງ1.000 – 2.000 ມິນລີແມັດ\ປີ ແລະ ມີຝົນບໍ່ຖີ້ມຊ່ວງດົນເກີນໄປ, ນອກຈາກນີ້ຈະຕ້ອງມີລະດູແລ້ງປະມານ 3-4 ເດືອນ (ສວນປູກປ່າພາກເອກະຊົນ,2539).
- ໄມ້ສັກເປັນໄມ້ທີ່ມັກແສງສະຫວ່າງ ຄວາມເຂັ້ມຂອງແສງທີ່ເໝາະສົມຄື: 75%–95% ຂອງປະລິມານແສງຕອນກາງເວັນທີ່ໄດ້ຮັບເຕັມທີ. ສະນັ້ນການປູກໄມ້ສັກຈິ່ງບໍ່ຄວນປູກໃນຮົ່ມ (ສວນປູກປ່າພາກເອກະຊົນ,2539).
- ອຸນຫະພູມຢູ່ລະຫວ່າງ 25 — 35 ອົງສາເຊ ແລະ ດິນທີ່ເໝາະສົມເປັນດິນທີ່ມີການລະບາຍນ້ຳໄດ້ດີ, ມີຄວາມເປັນກົດເປັນດ່າງ (PH) 6,5 – 7,5 ສ່ວນດິນທີ່ບໍ່ເໝາະສົມຕໍ່ການປູກໄມ້ສັກຄື: ເປັນດິນໜຽວ, ດິນລຸກລັງດິນຊາຍ ແລະ ດິນທີ່ມີນ້ຳຖ້ວມຂັງ (ອະພິຊາດ ຂາວສະອາດ, 2562)

## III. ການຈັດຫາແກ່ນ. ( Seed Collection )

### 1. ແຫລ່ງແກ່ນພັນ. ( Sources of Seed )

ການປູກສ້າງສວນໄມ້ສັກ ເປັນວຽກທີ່ຫັວງຜົນໄດ້ຮັບໃນໄລຍະຍາວແລະມີການລົງທຶນຂ້ອນຂ້າງສູງຈິ່ງຈະໄດ້ຮັບຜົນຕອບແທນ. ຄວນເກັບເອົາແກ່ນຈາກປາໄມ້ສັກທຳມະຊາດທີ່ມີໄມ້ສັກຂື້ນຢູ່ເປັນກຸ່ມ ແລະ ຈາກສວນປູກເອງ.



### 2. ລະດູການເກັບແກ່ນ( Collection Time ).

ການເກັບແກ່ນແມ່ນຈະເກັບໃນຊ່ວງຕົ້ນ ເດືອນມັງກອນ (1) ຫາ ເດືອນ ມີນາ(3) ຖ້າເກັບເອົາໃນຊ່ວງນີ້ ແກ່ນຈະສົມບູນ ແລະ ມີເປີເຊັນການແຕກງອກສູງ. ແກ່ນໄມ້ສັກ 1 ກິໂລ ມີ 1.070 ຫາ 3.467 ແກ່ນ (ອະພິຊາດ ຂາວສະອາດ, 2562).

### 3. ການເກັບຮັກສາແກ່ນ( Seed Storage ).

ແກ່ນພັນໄມ້ສັກທີ່ເກັບມາໄດ້ ຈະຕ້ອງນຳມາຕາກແດດໃຫ້ແຫ້ງດີ, ອານາໄມເອົາກາບຫຸ້ມແກ່ນແລະເສດຕ່າງໆອອກ.ຈາກນັ້ນກໍ່ນຳເອົາແກ່ນມາບັນຈຸລົງໃນກະສອບເປົາປ່ານ, ຄວນເກັບໄວ້ໃນບ່ອນທີ່ຮົ່ມ, ມີອາກາດຖ່າຍເທດີ, ຫຼີກລ່ຽງຈາກການທຳລາຍຂອງໜູ, ມົດ ແລະ ປວກ...... ຖ້າປະຕິບັດໄດ້ຕາມຂັ້ນຕອນທີ່ກ່າວໄວ້ຂ້າງເທິງແກ່ນສັກສາມາດເກັບໄວ້ໄດ້ດົນເຖິງ 9 ເດືອນ.( ອະພິຊາດ ຂາວສະອາດ, 2562 )

## IV. ການກ້າແກ່ນໄມ້ສັກ ( Teak Nursery ).

### 1. ການຄັດເລືອກພື້ນທີ່ ( Site Selection ).

- ເປັນພື້ນທີ່ທີ່ຮາບພຽງ, ມີຄວາມຄອ້ຍຊັນຕ່ຳ, ຄວາມຊຸ່ມຊື້ນສູງ, ມີການລະບາຍນ້ຳໄດ້ດີແລະດິນມີຄວາມອຸດົມສົມບູນດີ (ດິນແຄມນ້ຳຫຼືຕົມແກມຊາຍ)

### 2. ການກະກຽມໜານກ້າ.

ກ່ອນອື່ນໝົດຕ້ອງທຳການອານາໄມພື້ນທີ່ໃຫ້ກ້ຽງດີເສຍກ່ອນ ຈາກນັ້ນຈິ່ງທຳການຂຸດດິນແປງໜານທຸບດິນເທິງໜ້າໜານກ້າໃຫ້ມຸ່ນລະອຽດດີ. ໜານກ້າມີຄວາມກ້ວາງປະມານ 1–1,20 ແມັດ, ຍົກໜານໃຫ້ສູງ 30 ຊັງຕີແມັດ ສ່ວນຄວາມຍາວແມ່ນບໍ່ຈຳກັດຂື້ນຢູ່ກັບພື້ນທີ່, ໄລຍະຫ່າງລະຫວ່າງໜານຕໍ່ໜານປະມານ 30–50 ຊັງຕີແມັດ.



ໜານກ້າເບ້ຍໄມ້ສັກ

## V. ການຫວ່ານແກ່ນ ( Seed Sowing ).

### 1. ລະດູການກ້າແກ່ນ ( Sowing time ).

ການກ້າແກ່ນຄວນຈະເລີ້ມຢູ່ໃນຊ່ວງເດືອນມີນາ( 3) ຫາ ພຶດສະພາ (5) ຖ້າກ້າແກ່ນຊ້າເກີນໄປຈະເຮັດໃຫ້ເບ້ຍໄມ້ສັກມີຂະໜາດນ້ອຍ ແລະ ບໍ່ແຂງແຮງ.

### 2. ການກະຕຸ້ນແກ່ນ. Seed pre–Sowing Treatments.

ແກ່ນທີ່ຈະນຳໄປກ້າ ຄວນຈະມີການກະຕຸ້ນກ່ອນຄື: ນຳເອົາແກ່ນສັກບັນຈຸເຂົ້າໃນກະສອບ ຫລື ກະເປົາ ແລ້ວມັດໃຫ້ແຈບດີ ຈາກນັ້ນ ນຳເອົາໄປແຊ່ລົງນ້ຳປະມານ 4–5 ວັນ ແລ້ວເອົາຂື້ນມາຕາກແດດປະໄວ້ ປະມານ 5 – 6 ວັນ ຈິ່ງນຳເອົາແກ່ນໄປກ້າລົງໃນໜານ.

### 3. ການຫວ່ານແກ່ນ ( Seed Sowing ).

ການຫວ່ານແກ່ນນັ້ນ ອາດຈະຫວ່ານໄດ້ຫລາຍວິທີຄື: ແບບເປັນແຖວ ຫລື ເປັນຮ່ອງ ແລ້ວເອົາແກ່ນຍອດລົງຕາມຮ່ອງ ຫລື ຈະຫວ່ານທົ່ວພື້ນທີ່ກໍ່ໄດ້. ແຕ່ສ່ວນຫລາຍແມ່ນນິຍົມກັນຫວ່ານທົ່ວພື້ນທີ່ໜ້າໜານກ້າ, ຄວນຫວ່ານແກ່ນປະມານ 300 – 500 ແກ່ນ/ 1ຕາແມັດ.

### 4. ການໃຊ້ວັດຖຸປົກໜານກ້າ ( Seedbed Covering ).

ຫລັງຈາກຫວ່ານແກ່ນສຳເລັດແລ້ວ ຕ້ອງໄດ້ນຳເອົາວັດຖຸໃດນຶ່ງມາປົກໜ້າໜານກ້າເຊັ່ນ: ຂີ້ຊາຍ,ຂີ້ແກບ ແລະ ຂີ້ເລື່ອຍ ຂື້ນກັບຄວາມສະດວກ. ຂີ້ແກບເປັນວັດຖຸທີ່ຫາງ່າຍ ແລະ ລາຄາກໍ່ຖືກ, ສ່ວນຂີ້ຊາຍແມ່ນມີລາຄາແພງ ແລະ ຍາກຕໍ່ການຂົນສົ່ງ, ສຳລັບຂີ້ເລື່ອຍກໍ່ມີຄວາມສະດວກຄືກັບແກບ ແຕ່ບາງຄັ້ງອາດຈະເຮັດໃຫ້ເກີດມີເຊື້ອພະຍາດຄື: ດ້ວງເຈາະເຫັ້ງາ.



ໜານກ້າທີ່ປົກດ້ວຍແກບ

## VI. ການບົວລະບັດຮັກສາເບ້ຍໄມ້ໃນໜານກ້າ (Tending of Nursery ).

**1. ການຫົດນ້ຳ (watering ).**

ໃນໄລຍະກ້າແກ່ນພາຍໃນ 30 ວັນ ຖ້າຝົນຕົກບໍ່ເປັນປົກກະຕິ ຕ້ອງຫົດນ້ຳທັງຕອນເຊົ້າ ແລະ ຕອນແລງ ເພື່ອເຮັດໃຫ້ດິນມີຄວາມຊຸ່ມຊື່ນ ແລະ ຍັງຊ່ວຍເພີ້ມຄວາມຊຸ່ມຊື່ນໃນອາກາດອີກດ້ວຍ.

**2. ການກຳຈັດວັດສະພືດ (Weeding).**

ການກຳຈັດວັດສະພືດໃນໜານກ້າ ຖືວ່າ ມີຄວາມຈຳເປັນຫລາຍທີ່ສຸດ ເພາະວ່າໄມ້ສັກເປັນໄມ້ທີ່ຕ້ອງການແສງສະຫວ່າງຫລາຍ. ດັ່ງນັ້ນ, ການກຳຈັດວັດສະພືດໃນໜານກ້າ ແມ່ນເລີ້ມປະຕິບັດແຕ່ມື້ກ້າແກ່ນລົງໜານຈົນກ່ວາເບ້ຍໄມ້ສັກຈະມີຄວາມສູງປະມານ 30 ຊັງຕີແມັດ. ໂດຍໃຫ້ສັງເກດເບິ່ງຈຳນວນວັດສະພືດທີ່ຂື້ນປົກຄຸມເບ້ຍໄມ້ຫລາຍ ແມ່ນໃຫ້ເລີ້ມອານາໄມໂລດ.



ການກຳຈັດວັດຊະພືດ

## VII. ການກຽມເຫົ້ງາສັກ ເພື່ອນຳໄປປູກ.

ການຂຸດເຫົ້ງາໄມ້ສັກອອກຈາກໜານເພື່ອນຳໄປປູກ ແມ່ນຂຸດໃນຊ່ວງລະດູແລ້ງລະຫວ່າງ ເດືອນກຸມພາ (2) ຫາ ເດືອນ ຫາ ເມສາ (4) ຫລັງຈາກຕົບແຕ່ງເຫງົ້າແລ້ວແມ່ນສາມາດນຳໄປປູກໄດ້ເລີຍ.

ເຫງົ້າໄມ້ສັກທີ່ສາມາດຂຸດໄປປູກໄດ້ຕ້ອງມີອາຍຸ 1 ປີຂື້ນໄປ, ການຕັດແຕ່ງເຫົ້ງາແມ່ນເຮັດໄດ້ງ່າຍ ໂດຍໃຊ້ມີດຫຼືພ້າ ຕັດເອົາສ່ວນຂອງລຳຕົ້ນ ແລະ ຄໍຮາກອອກໃຫ້ເຫລືອພໍມີຕາຕິດຢູ່ປະມານ 2–3 ຄູ່ ຫຼື ຕັດເໜືອສ່ວນຂອງຄໍຮາກຍາວປະມານ 3–5 ຊັງຕີແມັດ ສ່ວນຮາກຝອຍຕ້ອງລິອອກໃຫ້ໝົດ ເຫລືອສ່ວນຂອງຮາກແກ້ວປະມານ 15 ຫາ 20 ຊັງຕີແມັດ ແລະ ພ້ອມທີ່ຈະນຳໄປເກັບຮັກສາຫຼືນຳໄປເອົາໄປປູກໄດ້.



ເຫົ້ງາໄມ້ສັກທີ່ຕັດແຕ່ງແລ້ວ

## VIII. ວິທີການເກັບຮັກສາເຫົ້ງາໄມ້ສັກ (Stump Storage ).

ໝາຍເຖິງການຂຸດກຽມເຫົ້ງາສັກຈາກໜານກ້າ ໃນລະດູປູກ ຫຼື ລະດູຝົນແລ້ວເກັບຮັກສາເຫົ້ງາໄວ້ ເພື່ອຂົນຍ້າຍໄປສູ່ພື້ນທີ່ປູກ. ເຊິ່ງການເກັບຮັກສາເຫົ້ງາສັກໃນຮູບການນີ້ ແມ່ນເຮັດໄດ້ງ່າຍ ໂດຍໃຊ້ເປົາປ່ານ ຈຸ່ມລົງນ້ຳໃຫ້ປຽກແລ້ວເອົາມາປົກຄຸມເຫົ້ງາສັກໄວ້ ຫລື ວ່າຈະເອົາເຫົ້ງາສັກ ບັນຈຸລົງໃນເປົາປ່ານຖົງປຣາສະຕິກ ແລະ ກະສອບກໍ່ໄດ້ ແຕ່ຕ້ອງເຈາະຮູໃຫ້ມີການລະບາຍອາກາດພໍສົມຄວນ. ການເກັບຮັກສາເຫົ້ງາໃນໄລຍະສັ້ນນີ້ ຄວນເກັບໄວ້ໃນບ່ອນທີ່ຮົ່ມ, ອາກາດລ່ວງດີ ແລະ ບໍ່ໃຫ້ກາຍ 7 ວັນໃນການເກັບຮັກສາ (ອະພິຊາດ ຂາວສະອາດ, 2562 ).

## IX. ການຂົນສົ່ງເຫົ້ງາ (Snipping of Stump ).

ເຫົ້ງາສັກທີ່ຖືກນຳໄປປູກ ບໍ່ວ່າຈະເປັນເຫົ້ງາສົດ ຫລື ເຫົ້ງາທີ່ຖືກເກັບຮັກສາຄວນມີຄວາມລະມັດລະວັງຢ່າງດີ ໃນເວລາມີການຂົນສົ່ງເຫົ້ງາໄປຍັງສວນປູກ.

ວິທີການກໍ່ຄື ນຳເອົາເຫົ້ງາສັກບັນຈຸລົງໃນກະສອບ, ເປົາປ່ານ, ຖົງປຣາສະຕິກຕ່າງໆ ຫລັງຈາກນັ້ນກໍ່ມັດປາກຖົງຫລືເປົາໃຫ້ແໜ້ນ ແລ້ວເອົານ້ຳມາພົມໃສ່ຖົງຫລືເປົາໃຫ້ຊຸ່ມພໍດີ. ຈຸດປະສົງແມ່ນເພື່ອກັນເຫົ້ງາສັກບໍ່ໃຫ້ຫ່ຽວແຫ້ງ ໃນລະຫວ່າງມີການຂົນສົ່ງ ເວລາຮອດສະຖານທີ່ປູກ ຕ້ອງເລີ້ມປູກເລີຍ.


ຂຽນໂດຍ : ສີຈັນ ຈັນດີພົດ

ສູນຄົ້ນຄ້ວາກະສິກຳແລະປ່າໄມ້ພາກເໜືອ

ໂທຣ : (856-71) 212 099

ແຟກ : (856-71) 212 467

ຕູ້ ປ.ນ : 487

E-mail: NAFReC@nafri.org.la


ກະຊວງກະສິກຳ ແລະ ປ່າໄມ້

ສະຖາບັນຄົ້ນຄ້ວາກະສິກຳແລະປ່າໄມ້ແຫ່ງຊາດ

ສູນຄົ້ນຄ້ວາກະສິກຳແລະປ່າໄມ້ພາກເໜືອ

# ບົດຮຽນການກະກຽມເຫງົ້າໄມ້ສັກໄປປູກ

# Nursery Technical of Teak



ພະຈິກ

2009